ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public

ປົກຂ່າວ

ທະນາຄານຮ່ວມພັດທະນາ ມະຫາຊົນ
ຈັດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ ປະຈຳປີ 2025



ໃນວັນທີ 30 ມັງກອນ 2026 ຢູ່ທີ່ໂຮງແຮມແລນມາກ ແມ່ຂອງ ລີເວີໄຊ ນະຄອນຫຼວງວຽງຈັນ, ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ຈັດ ກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ງານລ້ຽງ ຊົມເຊີຍຜົນສຳເລັດການດຳເນີນທຸລະກິດ ປະຈຳປີ 2025 ແລະ ຮັບຮອງ ແຜນການດຳເນີນທຸລະກິດ ປະຈຳປີ 2026.

ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະອອນ , ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ມີບັນດາ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ/ສູນບໍລິຫານ, ຫົວ ໜ້າໜ່ວຍບໍລິການ ແລະ ພະນັກງານວິຊາການ ທົ່ວປະເທດ ເຂົ້າຮ່ວມຢ່າງ ພ້ອມພຽງ.

ກອງປະຊຸມເລີ່ມດ້ວຍ ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທະນາຄານ ຮ່ວມພັດທະນາ ມະຫາຊົນ ໄດ້ສະຫຼຸບຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026.

ໃນປີ 2025 ຜ່ານມາ ເສດຖະກິດ ສປປ ລາວ ມີທ່າຂະຫຍາຍຕົວດີຂຶ້ນ ຍ້ອນມີ ການເປີດປີທ່ອງທ່ຽວລາວ.

ສະພາບເສດຖະກິດພາຍໃນ ກໍຄ່ອຍໆມີທ່າອ່ຽງດີຂຶ້ນ ຍ້ອນການເອົາໃຈໃສ່ຂອງ ລັດຖະບານໃນຊຸມປີທີ່ຜ່ານມາ ເຊິ່ງເປັນຜົນດີໃຫ້ແກ່ການດຳເນີນທຸລະກິດ ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ ສາມາດປະຕິບັດໄດ້ລື່ນຄາດໝາຍທີ່ວາງ ໄວ້ ຄື:

ຍອດຊັບສິນທັງໝົດ ເພີ່ມຂຶ້ນ	26% ທຽບໃສ່ປີ 2024
ຍອດເງິນຝາກ ເພີ່ມຂຶ້ນ	17% ທຽບໃສ່ປີ 2024
ຍອດສິນເຊື່ອ ເພີ່ມຂຶ້ນ	11% ທຽບໃສ່ປີ 2024

JDB ໃຫ້ສຸມໃສ່ໃນດ້ານວຽກງານການພັດທະນາລະບົບເຕັກໂນໂລຢີ ໃຫ້ທັນສະໄໝ ຄືການຍົກລະດັບລະບົບການບໍລິການທະນາຄານເກົ່າ ເພື່ອທັນເປັນລະບົບທະນາຄານທີ່ ທັນສະໄໝ ໄດ້ມາດຕະຖານສາກົນ ຮອງຮັບຫຼາຍຊ່ອງທາງ ແລະ ລະບົບການໂອນເງິນ ກັບສາກົນ, JDB ໄດ້ພັດທະນາອີງກອນ ແລະ ຜະລິດຕະພັນທາງການເງິນໃໝ່ໆ ຢ່າງ ສະໜ່ຳສະເໝີ ປະສານກັບເຕັກໂນໂລຊີໃໝ່ ແລະ ຜະລິດຕະພັນເອເລັກໂຕຼນິກທີ່ທັນ ສະໄໝ ເພື່ອຮອງຮັບການບໍລິການລູກຄ້າ ໃນຍຸກ Digital ນຳໃຊ້ AI ເຂົ້າມາບໍລິຫານ ຈັດການໃຫ້ສະດວກສະບາຍຍິ່ງຂຶ້ນ, ລູກຄ້າສາມາດເຮັດທຸລະກຳ ດ້ວຍຕົນເອງເທິງມືຖື ໃນທຸກພື້ນທີ່ຂອງໂລກ ທີ່ມີສັນຍານ Internet ເປັນຕົ້ນແມ່ນ JDB Yes Mobile Banking ທະນາຄານເທິງມືຖື ເປັນໜຶ່ງໃນການບໍລິການທີ່ໂດດເດັ່ນ ສາມາດຊ່ອຍ ຕອບສະໜອງການເຮັດທຸລະກຳທາງການເງິນ ແລະ ທຸລະກິດຂອງລູກຄ້າ ສະດວກ ສະບາຍ ວ່ອງໄວ, ທັນສະໄໝ ແລະ ປອດໄພ, ຖືກນຳໃຊ້ຢ່າງກວ້າງຂວາງ ໃນສັງຄົມ ລາວ.





ທະນາຄານຮ່ວມພັດທະນາ ມະຫາຊົນ ໄດ້ປະສົບຜົນສຳເລັດໃນການປົດການຊື້-ຂາຍຮຸ້ນ ຢ່າງເປັນທາງການ, ພາຍຫຼັງປະສົບຜົນສຳເລັດໃນການອອກຈຳໜ່າຍຮຸ້ນ ໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 75,333,900 ຮຸ້ນ, ລາຄາ 8,800 ກີບ/ຮຸ້ນ ແລະ ສາມາດລະດົມທຶນໄດ້ 656,158,260,000 ກີບ ຫຼື ປະມານ 30 ລ້ານໂດລາສະຫະລັດ. ຫຼ້າສຸດ, ການເປີດຂາຍຮຸ້ນຄັ້ງທຳອິດຂອງ JDB ໃນ ຕອນເຊົ້າຂອງວັນທີ 10 ຕຸລາ 2025, ແລະ ໃນວັນທີ 25 ທັນວາ 2025 ໄດ້ ຈ່າຍເງິນປັນຜົນ ປີ 2024 ໃຫ້ແກ່ຜູ້ຖືຮຸ້ນສຳເລັດ.

ທະນາຄານຮ່ວມພັດທະນາ ມະຫາຊົນ
ຈັດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ ປະຈຳປີ 2025







ດ້ານແຫຼ່ງທຶນ ແລະ ແຜນການເປົ້າໝາຍ KPI ປະຈຳປີ 2026 ຈະຕ້ອງຂຸດຄົ້ນ ຊອກຫາແຫຼ່ງລາຍຮັບເພີ່ມ ຈາກຜະລິດຕະພັນອື່ນໆ ທີ່ມີໃນປັດຈຸບັນ. ການລະດົມ ແຫຼ່ງທຶນ ຕ້ອງຕິດພັນກັບການປ່ອຍເງິນກູ້ ຕິດພັນກັບການເປີດບັນຊີເງິນຝາກຂອງ ລູກຄ້າ ແຕ່ລະລາຍສັນຍາ ແລະ ຢູ່ໜ່ວຍບໍລິການ ຕາມແຜນ KPI ທີ່ວາງໄວ້.
ວຽກງານຈັດຕັ້ງ-ພະນັກງານ ຕ້ອງສ້າງຄວາມສາມັກຄີກັນເປັນປຶກແຜ່ນ, ຍົກລະດັບ ຄວາມຮູ້, ຄວາມສາມາດ ຂອງພະນັກງານ ທຸກລະດັບໃຫ້ເຂັ້ມແຂງ. ໃນກອງ ປະຊຸມໄດ້ຍ້ອງຍໍຊົມເຊີຍ ໜ່ວຍບໍລິການ ທີ່ມີຜົນງານດີເດັ່ນ ທີ່ບັນລຸເປົ້າໝາຍ KPI ແຕ່ລະດ້ານ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າວຽກງານຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ ໃຫ້ມີກຳລັງໃຈ ແລະ ຕັ້ງໜ້າປະຕິບັດວຽກ ງານ ໃຫ້ດີຂຶ້ນກວ່າເກົ່າ, ທະນາຄານຮ່ວມພັດທະນາ ມະຫາຊົນ ໄດ້ມີນະໂຍບາຍສູງ ໃຫ້ແກ່ພະນັກງານຂອງຕົນ ເພື່ອແກ້ໄຂຊີວິດການເປັນຢູ່ດີຂຶ້ນແຕ່ລະປີ.
ໃນຕອນທ້າຍຂອງກອງປະຊຸມ ກໍໄດ້ຮັບຟັງການໂອ້ລົມຈາກ ທ່ານ ວິໄລ ສີພະພອນ , ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ເຊິ່ງທ່ານ ໄດ້ ຍ້ອງຍໍຊົມເຊີຍຄະນະຜູ້ບໍລິຫານ ແລະ ພະນັກງານທຸກຄົນ ທີ່ມີຜົນງານດີເດັ່ນ ທີ່ ສາມາດບັນລຸເປົ້າໝາຍ KPI ທີ່ວາງໄວ້ ແລະ ໃຫ້ທິດຊີ້ນຳ ເພື່ອປັບປຸງວຽກງານທີ່ ຄົງຄ້າງ ໃຫ້ດີຂຶ້ນກວ່າເກົ່າ.

ໃນໄລຍະຜ່ານມາ ທະນາຄານຮ່ວມພັດທະນາ ມະຫາຊົນ ໄດ້ປ່ອຍສິນເຊື່ອເຂົ້າໃນ ການສ້າງສາພັດທະນາເສດຖະກິດ-ສັງຄົມ ກໍ່ຄືການກໍ່ສ້າງພື້ນຖານໂຄງລ່າງຂອງ ປະເທດເຮົາ ແລະ ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມຕະຫຼອດມາ.
ຫຼັງຈາກນັ້ນໃນພາກຄ່ຳຂອງວັນດຽວກັນ ກໍ່ໄດ້ມີງານລ້ຽງຊົມເຊີຍຜົນສຳເລັດ ການດຳເນີນທຸລະກິດປະຈຳປີ 2025, ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026 ຂອງ JDB ໂດຍການກ່າວຕ້ອນຮັບໂດຍ ທ່ານ ເອກະພັນ ພະພີທັກ, ປະທານຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ໂດຍໃຫ້ກຽດເຂົ້າຮ່ວມຄັ້ງນີ້ ມີການນຳພັກ-ລັດ ລະດັບສູງ ແລະ ບັນດາລູກຄ້າທີ່ຖືກເຊີນຈຳນວນໜຶ່ງ ຕະຫຼອດ ພະນັກງານຂອງທະນາຄານຮ່ວມພັດທະນາ ມະຫາຊົນ ໃນທົ່ວລະບົບ ກໍໄດ້ເຂົ້າ ຮ່ວມຢ່າງພ້ອມພຽງ.

ພ້ອມດຽວກັນນັ້ນ ກໍໄດ້ມີວາລະພິເສດ ໃນການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ (EXIM Bank Thailand) ແລະ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ຈາກນັ້ນກໍໄດ້ຮັບຊົມວີດີໂອ ພາບລວມ ຜົນງານຂອງທະນາຄານຮ່ວມ ພັດທະນາ ມະຫາຊົນ ທີ່ຜ່ານມາ ແລະ ວີດີໂອການເປີດຜະລິດຕະພັນໃໝ່ ເຊັ່ນ: ການບໍລິການສິນເຊື່ອອອນລາຍ (Digital Loan Services), ການບໍລິການບັດ ສະເໝືອນຈິງ (Virtual Card) ແລະ ບັດສິນເຊື່ອສາກົນອິນຟີນິດ (Visa Credit Infinite). ນອກຈາກນັ້ນ ຍັງໄດ້ມີພິທີຈັບລາງວັນໃຫ້ລູກຄ້າຜູ້ໂຊກດີ ໃນ ໂຄງການແຈກໂຊກໃຫຍ່ ຍິ່ງໃຫຍ່ອະລັງການ ເຊິ່ງເປັນລູກຄ້າສຳລັບເງິນຝາກປະຈຳ 5 ປີ, ຜູ້ໂຊກດີແມ່ນ ທ່ານ ຄຳໄລ ປັນຍາຄຸນ, ທີ່ເປັນລູກຄ້າຂອງ JDB ໃນແຂວງ ເຊກອງ, ເປັນຜູ້ໂຊກດີໄດ້ຮັບລາງວັນລົດ TOYOTA PRADO ໃນປີ 2026 JDB ຈະຕ້ອງຕ້ອງໄດ້ອອກແຮງສູ້ຊົນສ້າງຜົນກຳໄລ ໃຫ້ບັນລຸເປົ້າໝາຍທີ່ວາງໄວ້ ເພື່ອປະກອບສ່ວນ ມອບພັນທະອາກອນໃຫ້ກະຊວງການເງິນ ເພື່ອສ້າງສາ ພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງ ໂດຍໄປຕາມຄຳຂວັນຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ **“ເຕີບໃຫ່ຍໄປພ້ອມກັນ”.**